**ການບ້ານບົດທີ 14 ພາກຕົ້ນ**

# ການປະຊຸມໃນກຸງເຢລູຊາເລັມ

(ກຈກ 15)

**1** ເຮົາຮຽນມາແລ້ວກ່ຽວກັບຈົດໝາຍເຖິງຄຼິດສະຕະຈັກຄາລາເຕຍທີ່ໂປໂລຂຽນຫຼັງຈາກກັບໄປເມືອງ ອັນຕີໂອເຂຍ. ແຕ່ເມື່ອໂປໂລປະກາດໃນເຂດຄາລາເຕຍມີຄົນທີ່ສອນບໍ່ຈິງມາລົບກວນຄຼິດສະຕະຈັກ ໃນເມືອງອັນຕີໂອເຂຍ. (ກຈກ 15:1 ແລະ ຄລຕ 2:12). ເຮົາຮຽນເລື່ອງນີ້ໃນການ ບ້ານບົດທີ 10 ທັງພາກຕົ້ນແລະພາກປາຍ (10 ຕ ແລະ 10 ປ) ທີ່ໂປໂລຕໍ່ວ່າເປໂຕທີ່ອັນຕີໂອ ເຂຍ. ແມ່ນຄົນໃດທີ່ຖືກຫຼອກລວງໃນເລື່ອງນັ້ນ? (ເລືອກ)

ກ. ເປໂຕເມື່ອໄປຢ້ຽມໃນອັນຕີໂອເຂຍ

ຂ. ຄຼິດສະຕຽນຊາດຢິວຄົນອື່ນ

ຄ. ໂປໂລ

ງ. ບາລະນາບາ

**2** ໃຫ້ອ່ານ ກຈກ 15:1 ອີກ. ຜູ້ປະກາດພະທຳບໍ່ຈິງໃນອັນຕີໂອເຂຍສອນຢ່າງໃດ? (ເລືອກ)

ກ. ສອນຜິດປະການດຽວກັບໝູ່ໃນຄາລາເຕຍ

ຂ. ສອນຜິດໃນເລື່ອງອື່ນ

ຄ. ບໍ່ສອນຜິດ

**3** ໜ້າສິງສານໂປໂລ ຄົນທີ່ສອນບໍ່ຈິງຕໍ່ສູ້ໃນຄາລາເຕຍແລະອັນຕີໂອເຂຍໃນເວລາດຽວກັນ. ໂປໂລ ຕອບຄວາມດຽວໃນທັງສອງບ່ອນ ແມ່ນໃນພະທຳໃດທີ່ເຮົາເຫັນໂປໂລຕອບເຂົາຢ່າງແຈ່ມແຈ້ງ? ________________________________________________

**4** ພວກຄຼິດສະຕຽນເຮົາທີ່ບໍ່ເປັນຊາດຢິວ ຈຶ່ງຂອບໃຈໂປໂລທີ່ເພິ່ນແນະນຳຄວາມເສລີພາບຄຼິດສະຕຽນ ໃນພະທຳຄາລາເຕຍນັ້ນ. ຜົນສຸດທ້າຍທັງເປໂຕແລະບາລະນາບາເຫັນພ້ອມກັບໂປໂລໃນເລື່ອງນີ້. ຄຼິດສະຕະຈັກໃນອັນຕີໂອເຂຍຕັດສິນໃຈວ່າຈະໃຫ້ໂປໂລແລະບາລະນາບາໄປກຸງເຢລູຊາເລັມອີກເທື່ອ ໜຶ່ງ.



ກ. ເທື່ອທຳອິດທີ່ໂປໂລຮ່ວມກັບບາລະນາບາ(ແລະຕີໂຕ) ໄປກຸງເຢລູຊາເລັມ ເຂົາໄປເຮັດຫຍັງ? (ເລືອກ)

_______ ເອົາຄວາມຊ່ວຍເຫຼືອໄປ _______ ໄປຮ່ວມກັບພວກສາວົກ

ຂ. ເປັນຫຍັງຄຼິດສະຕະຈັກອັນຕີໂອເຂຍໃຊ້ເຂົາທັງສອງໄປເທື່ອທີສອງ? (ເລືອກ)

________ ເອົາຄວາມຊ່ວຍເຫຼືອໄປ _______ ໄປປະຊຸມກັບພວກສາວົກ

**5** ຄຼິດສະຕະຈັກອັນຕີໂອເຂຍໃຊ້ໂປໂລແລະບາລະນາບາໄປເຢລູຊາເລັມສອງເທື່ອ ຄືເທື່ອທຳອິດເພື່ອ ຊ່ວຍເຂົາ ແລະເທື່ອທີ່ສອງໃຫ້ໄປຮ່ວມກັບເຫຼົ່າອັກຄະສາວົກ. ລະຫວ່າງສອງເທື່ອນັ້ນ ໂປໂລ ໄປປະກາດເຂດໃດ? ____________________________________________

**6** ກ. ເທື່ອທຳອິດທີ່ເຂົາທັງສອງໄປກັບຕີໂຕແລະກ່ອນທີ່ໄປປະກາດໃນຄາລາເຕຍ ເຂົາໄປໂດຍຈຸດ ປະສົງໃດ? ___________________________________________________

ຂ. ຫຼັງຈາກໄປປະກາດພະທຳໃນຄາລາເຕຍ ເປັນດ້ວຍເຫດໃດທີ່ເຂົາໄປກຸງເຢລູຊາເລັມ?

______________________________________________________________




**7** ໃນການຮ່ວມກັນນັ້ນພວກອັກຄະສາວົກແລະພວກເຖົ້າແກ່ ເຫັນພ້ອມກັບໂປໂລຕາມທີ່ຂຽນໄວ້ໃນພະທຳຄາລາ ເຕຍ ວ່າຄຼິດສະຕຽນທີ່ບໍ່ເປັນຊາດຢິວເຫຼົ່ານັ້ນບໍ່ຕ້ອງຮັບພິທີຕັດເພາະເຂົາຈະໄດ້ລອດໂດຍການເຊື່ອໄວ້ວາງ ໃຈໃນພະເຢຊູ. ແຕ່ຍັງມີຝ່າຍຄ້ານທີ່ຕໍ່ຕ້ານແລ້ວເຂົາຖຽງກັນ ພວກຝ່າຍຂັດຄ້ານເວົ້າກ່ອນ:

ກ. ຝ່າຍຂັດຄ້ານໃນການຮ່ວມກັນນັ້ນ ມາຈາກພວກໃດ? ______________________

ຂ. ຝ່າຍຂັດຄ້ານຖືວ່າຄຼິດສະຕຽນທີ່ບໍ່ເປັນຊາດຢິວ ຈຳເປັນຕ້ອງເຮັດຫຍັງ?

_______________________________ ແລະ ____________________________

**8** ເຂົາໂຕ້ແຍ້ງກັນໄປ ໆ ມາ ໆ ແລ້ວເປໂຕລຸກຂຶ້ນກ່າວເລື່ອງໂກເນລີໂອທີ່ເປັນນາຍຮ້ອຍກອງທະ ຫານໂລມທີ່ຮັບເຊື່ອພ້ອມທັງຄອບຄົວ. ຕໍ່ໄປໂກເນລີໂອກໍຮັບພະວິນຍານດ້ວຍ. ຜົນສຸດທ້າຍເປໂຕ ກ່າວດັ່ງຕໍ່ໄປນີ້:




ເປໂຕເຂົ້າຂ້າງພວກໃດ? (ເລືອກ)

ກ. ພີ່ນ້ອງຕ່າງຊາດຕ້ອງຮັບພິທີຕັດ

ຂ. ເຂົາບໍ່ຕ້ອງຮັບພິທີຕັດ

**9** ແຕ່ກ່ອນ ເປໂຕເອງຖອຍຕົວຈາກພີ່ນ້ອງທີ່ບໍ່ເປັນຊາດຢິວໃນອັນຕີໂອເຂຍ ເປໂຕບໍ່ຍອມນັ່ງໂຕະກັບ ເຂົາ ແລ້ວບາລະນາບາກໍ່ເຮັດຕາມແບບບໍ່ດີຂອງເປໂຕ. ແຕ່ຕາມທີ່ເພິ່ນກ່າວໃນການຮ່ວມກັນເທື່ອນີ້ ເປໂຕ ປ່ຽນໃຈແລ້ວເພິ່ນເຫັນພ້ອມກັບໂປໂລ. ດຽວນີ້ ເປໂຕຖືຢ່າງໃດ? (ເລືອກ)

ກ. ເຫັນພ້ອມກັບໂປໂລຢ່າງເຕັມໃຈ ຂ. ຍັງສົງໄສຢູ່

**10** ໃຫ້ທ່ານສັງເກດຄວາມຂອງໂປໂລໃນຈົດໝາຍ: "ເພື່ອເສລີພາບນັ້ນແຫຼະ ພະຄຣິດຈຶ່ງໄດ້ຊົງໂຜດໃຫ້ເຮົາທັງຫຼາຍເປັນອິດສະລະ ເຫດສັນນັ້ນ ຈົ່ງຕັ້ງ ໝັ້ນຄົງຢູ່ ແລະຢ່າຍອມເຂົ້າທຽມແອກເປັນຂ້ອຍຂ້າອີກ. " (ຄລຕ 5:1) ເອົາມາປຽບທຽບກັບຄວາມຂອງເປໂຕໃນການຮ່ວມກັນ: "ເປັນຫຍັງເຈົ້າທັງຫຼາຍຈຶ່ງທົດລອງພະເຈົ້າ ໂດຍເອົາແອກວາງໃສ່ຄໍພວກສິດ ຊຶ່ງແອກນັ້ນບັນພະບຸ ລຸດຂອງເຮົາ ຫຼືຕົວເຮົາເອງກໍແບກບໍ່ໄດ້. " (ກຈກ 15:10) ເປໂຕກ່າວອ້າງຄວາມໃດຈາກໂປໂລທີ່ປຽບທຽບກັບນ້ຳໜັກວາງໃສ່ຄໍຂອງຂ້ອຍຂ້າ ___________________________

**11** ໃນຈົດໝາຍໂປໂລຍັງກ່າວອີກວ່າ:

"ເຮົາບໍ່ໄດ້ເຮັດໃຫ້ພະຄຸນຂອງພະເຈົ້າເປັນໂມຄະ ເພາະວ່າຖ້າຄວາມຊອບທຳໄດ້ມາໂດຍທາງ ພະບັນຍັດແລ້ວ ພະຄຣິດກໍຊົງສິ້ນພະຊົນໂດຍບໍ່ມີປະໂຫຍດ. " (ຄລຕ 2:21)

ໃນການລວມ ເປໂຕກ່າວວ່າ: "ເຮົາເຊື່ອວ່າ ເຮົາຈະໄດ້ພົ້ນໂດຍພະຄຸນຂອງພະອົງເຈົ້າເຢຊູເໝືອນຢ່າງເຂົາ. " (ກຈກ 15:11) ຄືເປໂຕຍອມຮັບຈາກໂປໂລວ່າ ໄດ້ລອດພົ້ນໂດຍທາງໃດ?

________________________________________________________________

**12** ຄຳກ່າວຂອງເປໂຕໃນການລວມ ແຈ້ງດີວ່າເພິ່ນເຊື່ອຕາມທີ່ໂປໂລຊຽນໃນພະທຳຄາລາເຕຍ. ທຸກຄົນ ໃນນັ້ນມິດງຽບຟັງບາລະນາບາກັບໂປໂລ:



( ກຈກ 15:12 )

ເຫັນວ່າບາລະນາບາທີ່ຫຼົງຜິດກັບເປໂຕໃນອັນຕີໂອເຂຍ ປ່ຽນໃຈແລ້ວເຫັນດີກັບໂປໂລ. ບາລະນາບາ ຖືວ່າຢ່າງໃດ? (ເລືອກ)

ກ. ເຫັນພ້ອມກັບໂປໂລຢ່າງເຕັມໃຈ ຂ. ຍັງສົງໄສຢູ່

**13** ຜົນສຸດທ້າຍ ເຫັນວ່າຢາໂກໂບທີ່ເປັນນ້ອງຂອງພະເຢຊູແລະເປັນຜູ້ນຳຄຼິດສະຕະຈັກໃນກຸງເຢລູຊາເລັມ



( ກຈກ 15:13~19 )

ກ. ຜູ້ນຳຄຼິດສະຕະຈັກໃນກຸງເຢລູຊາເລັມ ຄືໃຜ? ______________________________

ຂ. ເພິ່ນເຫັນວ່າຢ່າງໃດກ່ຽວກັບພີ່ນ້ອງບໍ່ເປັນຊາດຢິວ? (ເລືອກ)

_______ ຈຳເປັນຕ້ອງຮັບພິທີຕັດ _______ ບໍ່ຕ້ອງຮັບພິທີຕັດ

ຄ. ອັກຄະສາວົກສອງຄົນໃດຕໍ່ໄປນີ້ທີ່ເຂົາເຫັນພ້ອມກັບໂປໂລແລະບາລະນາບາ ວ່າ ຄຼິດສະຕຽນຕ່າງຊາດບໍ່ຕ້ອງເຂົ້າສາສະໜາຢິວ? (ເລືອກ ແຕ່ສອງຄົນ)

_______ ເປໂຕ _______ ອັນເດອາ

_______ ຢາໂກໂບອ້າຍຂອງໂຢຮັນ _______ ຢາໂກໂບນ້ອງຂອງພະເຢຊູ

**14** ດັ່ງນັ້ນ ທີ່ປະຊຸມໃນກຸງເຢລູຊາເລັມຕົກລົງຈະຝາກຈົດໝາຍໄປເຖິງຄຼິດສະຕະຈັກຄົນຕ່າງຊາດໃນ ເມືອງອັນຕີໂອເຂຍວ່າ ເຂົາບໍ່ຕ້ອງຮັບພິທີຕັດເພື່ອໄດ້ລອດພົ້ນຈາກບາບ ແມ່ນລວມບ່ອນໃດທີ່ສະໜັບ ສະໜູນຫຼັກຄຳສອນໃນຈົດໝາຍເຖິງຄາລາເຕຍ? ____________________

**15** ຈົດໝາຍນັ້ນຕັ້ງຕົ້ນໂດຍຄວາມນີ້:

"ອັກຄະສາວົກ ແລະພວກເຖົ້າແກ່ຜູ້ເປັນພີ່ນ້ອງຂອງພວກທ່ານ ຄຳນັບມາຍັງທ່ານທັງຫຼາຍຜູ້ເປັນ ພີ່ນ້ອງ ຊຶ່ງເປັນຄົນຕ່າງຊາດທີ່ຢູ່ໃນເມືອງອັນຕີໂອເຂຍ ແຂວງຊີເລຍ ແລະແຂວງກີລີເກຍຊາບ"

"ດ້ວຍພວກເຮົາໄດ້ຍິນຂ່າວວ່າມີລາງຄົນໃນພວກເຮົາໄດ້ໄປລົບກວນແລະເຮັດໃຫ້ໃຈຂອງພວກທ່ານ ປັ່ນປ່ວນໄປດ້ວຍຖ້ອຍຄຳທີ່ເຮົາບໍ່ໄດ້ສັ່ງເຂົາ". (ກຈກ 15:23-24)

ກ. ພວກຄົນທີ່ສອນບໍ່ຈິງນັ້ນ ບອກວ່າແມ່ນໃຜໃຊ້ເຂົາໄປ? (ຄລຕ 2:12) ______________

ຂ. ແຕ່ໃນ ກຈກ 15:24 ນັ້ນ ເຫັນວ່າຢາໂກໂບບໍ່ໄດ້ໃຊ້ໄປ. ຜູ້ສອນບໍ່ຈິງນັ້ນເວົ້າຄວາມຈິງ ຫຼື ຄວາມຕົວະ? ______________________________________________

**16** ໃຫ້ອ່ານ ກຈກ 15:25-26 ແມ່ນໃນເມືອງໃດທີ່ເຂົາຄວ່າງຫີນໃສ່ໂປໂລ? (ເລືອກ)

ກ. ອັນຕີໂອເຂຍປີຊີເດຍ ຂ. ລິຊະທາ ຄ. ອີໂກນີອົນ

**17** ການຮ່ວມກັນໃນກຸງເຢລູຊາເລັມເທື່ອນີ້ ເຂົາສະໜັບສະໜູນຄຳສອນຂອງໂປໂລກ່ຽວກັບຄຼິດສະຕຽນທີ່ບໍ່ໄດ້ເປັນ ຊາດຢິວ. ອີກປະການໜຶ່ງໃນການລວມນັ້ນເຂົາແຈ້ງວ່າຢ່າງໃດກ່ຽວກັບຜູ້ປະກາດພະທຳບໍ່ຈິງຈາກ ກຸງເຢລູຊາເລັມ ທີ່ໄປລົບກວນພີ່ນ້ອງໃນອັນຕີໂອເຂຍ? (ເລືອກ)

ກ. ຢາໂກໂບບໍ່ໄດ້ໃຊ້ເຂົາໄປ ຂ. ຢາໂກໂບໃຊ້ເຂົາໄປແທ້

**18** ຂອບໃຈພະເຈົ້າທີ່ມີຂ້າໃຊ້ຂອງພະເຈົ້າຜູ້ໜຶ່ງທີ່ອົດທົນໃນການປະກາດຄວາມເສລີພາບຂອງຄຼິດສະ ຕຽນທີ່ບໍ່ເປັນຊາດຢິວ. ຂ້າໃຊ້ຂອງພະເຈົ້າຄົນນັ້ນບໍ່ຍອມບັງຄັບພີ່ນ້ອງຕ່າງຊາດໃຫ້ເປັນຂ້ອຍຂ້າ ຂອງພະບັນຍັດຂອງໂມເຊ. ຂ້າໃຊ້ຂອງພະເຈົ້າທີ່ຊ່ວຍຮັກສາຄວາມເສລີພາບຄຼິດສະຕຽນໄວ້ຄືໃຜ? ______________________________________________

ຄຳຕອບ:

**1** *ກ ຂ ງ ຖືກ*

**2** *ກ ຖືກ*

**3** *ພະທຳຄາລາເຕຍ*

**4** *ກ. ເອົາຄວາມຊ່ວຍເຫຼືອໄປ ຂ. ໄປຮ່ວມກັບພວກສາວົກ*

**5** *ຄາລາເຕຍ*

**6** *ກ. ເອົາຄວາມຊ່ວຍເຫຼືອໄປໃຫ້ ຂ. ໄປຮ່ວມກັບພວກອັກຄະສາວົກ*

**7** *ກ. ພວກຟາລີຊາຍ ຂ. ຕ້ອງຮັບພິທີຕັດ ແລະ ຖືພະບັນຍັດຂອງໂມເຊ*

**8** *ເຂົາບໍ່ຕ້ອງຮັບພິທີຕັດ*

**9** *ກ ຖືກ*

**10** *ແອກ*

**11** *ພະຄຸນຂອງພະເຈົ້າ*

**12** *ກ ຖືກ*

**13** *ກ. ຢາໂກໂບ ຂ. ບໍ່ຕ້ອງຮັບພິທີຕັດ ຄ. ເປໂຕ ຢາໂກໂລນ້ອງຊາຍຂອງພະເຢຊູ*

**14** *ລວມໃນກຸງເຢລູຊາເລັມ*

**15** *ກ. ຢາໂກໂບ ຂ. ຕິວະ*

**16** *ຂ ຖືກ*

**17** *ກ ຖືກ*

**18** *ໂປໂລ*

## ການບ້ານບົດທີ 14 ພາກປາຍ

# ອີກສອງເທື່ອທີ່ໂປໂລອອກໄປປະກາດ

*ບົດທີ 14 ນີ້ເປັນບົດສຸດທ້າຍໃນປຶ້ມສອນນີ້. ເຮົາຮຽນເລື່ອງປະຫວັດໂປໂລຈົນເຖິງການຮ່ວມກັນ ໃນເຢລູຊາເລັມທີ່ເຂົາປະຕິເສດຄໍາສອນບໍ່ຈິງ. ການບ້ານບົດສຸດທ້າຍນີ້ຈະສະຫລູບເລື່ອງຕໍ່ໄປໃນ ຊີວິດຂອງໂປໂລ. ຖ້າທ່ານຮຽນຫຼັກສູດຊີວິດໂປໂລທີ 2 ແລະ 3 ຈະຮຽນລະອຽດກວ່າ.*

**1** ເທື່ອທໍາອິດໂປໂລເດີນທາງໄປປະກາດແກ່ຄົນຕ່າງຊາດສະເພາະ ເພິ່ນໄປໃສ? __________

______________________________________________________________

**2** ພໍດີໂປໂລກັບມາຈາກການປະກາດພະທໍາໃນເຂດຄາລາເຕຍ ຄຼິດສະຕະຈັກອັນຕີໂອເຂຍໃຊ້ໂປໂລ ແລະບາລະນາບາໄປເຢລູຊາເລັມ.

ກ. ກ່ອນຈະໄປປະກາດໃນຄາລາເຕຍ ໂປໂລແລະບາລະນາບາພາກັນເອົາຫຍັງໄປນໍາ?

______________________________________________________________

ຂ. ຫຼັງຈາກປະກາດຢູ່ຄາລາເຕຍທັງສອງຄົນນັ້ນໄປເຢລູຊາເລັມອີກ. ເຂົາໄປຫຍັງ?

______________________________________________________________

**3** ໂປໂລເຫັນວ່າການຮ່ວມກັນໃນກຸງເຢລູຊາເລັມສະໜັບສະໜູນການປະກາດແກ່ຄົນຕ່າງຊາດແລ້ວ ເພິ່ນກັບໄປອັນຕີໂອເຂຍຢ່າງກະຕືລືລົ້ນທີ່ຈະໄປປະກາດໃນເຂດທີ່ບໍ່ຮູ້ເລື່ອງພະອົງ ຄືໃນແຂວງມາເກໂດເນຍແລະແຂວງອະຊາຢາ. (ເບິ່ງແຜນທີ່ໜ້າ 235)

ກ. ເທື່ອທໍາອິດ ໂປໂລໄປປ່າວປະກາດຢູ່ໃສ? ______________________________

ຂ. ເທື່ອທີສອງຈະໄປສອງແຂວງໃດ? __________________________________

**4** ເມື່ອເລີ້ມຕົ້ນວາງແຜນໄປປະກາດເທື່ອທີສອງນີ້ ເພິ່ນຍັງບໍ່ຮູ້ເທື່ອວ່າພະອົງຈະໃຫ້ໄປມາເກໂດເນຍ ແລະອະຊາຢາ.



( ກຈກ 15:36 )

ກ. ເມື່ອໂປໂລວາງແຜນຈະໄປປະກາດເທື່ອທີສອງນີ້ ເພິ່ນຢາກກັບໄປບ່ອນໃດ?

______________________________________________________________

ຂ. ແຕ່ຜົນສຸດທ້າຍພະອົງນຳເຂົາໄປປະກາດໃນສອງແຂວງໃດ?

_______________________________________________

**5** ໂປໂລຍັງວາງແຜນວ່າຈະໄປກັບບາລະນາບາອີກ ແຕ່ເວລາຈະໄປແທ້ບໍ່ໄດ້ໄປຮ່ວມກັບບາລະນາບາ. ໃນ ກຈກ 15:36-41 ໂປໂລແລະບາລະນາບາຖົກຖຽງກັນຢ່າງຮ້າຍແຮງ. ໂປໂລກັບໄປຄາລາເຕຍ ແລ້ວຫາຄຣິດສະຕຽນໜຸ່ມຈາກລີຊະທາໄປນຳກັນ.

ກ. ຕາມ ໃນ ກຈກ 16:1 ຜູ້ທີ່ຈະໄປກັບໂປໂລຊື່ຫຍັງ? ____________________

ຂ. ຜົນສຸດທ້າຍ ເຂົາທັງສອງພາກັນໄປປະກາດໃນສອງແຂວງໃດ? ______________

_______________________________________________

**6** ໂປໂລມີຍຸດທະສາດໃນການຕັ້ງຄຣິດສະຕະຈັກໃໝ່ ເພິ່ນກັບໄປຢັ້ມຄຣິດສະຕະຈັກທີ່ຕັ້ງໄວ້ແລ້ວ ແຕ່ຍິ່ງ ກວ່ານັ້ນອີກເພິ່ນໄປປະກາດໃນເຂດໃໝ່ຢູ່ສະເໝີ. ໃນເທື່ອທີສອງທີ່ໄປປະກາດນີ້:

ກ. ແມ່ນໃນເຂດໃດທີ່ໄປຢັ້ມຢາມຄຣິດສະຕະຈັກທີ່ຕັ້ງໄວ້ແລ້ວ? ______________

ຂ. ແລ້ວເພິ່ນໄປປະກາດໃໝ່ໃນສອງແຂວງໃດ? ________________________

ຄ. ຕີໂມທຽວທີ່ໄປປະກາດນຳໂປໂລເປັນຄົນແຂວງໃດ? ____________________

**7** ໂປໂລໄປປະກາດເທື່ອທີສອງ:




ກ. ໃນສາມແຂວງທີ່ໂປໂລໄປເທື່ອນີ້ ໄປແຂວງໃດກ່ອນ? ___________________

ຂ. ແຂວງໃດທີສອງ? ______________________________________

ຄ. ແຂວງໃດສຸດທ້າຍ? _____________________________________

ເຖິງວ່າໂປໂລໄປຢັ້ມຢາມຄຣິດສະຕະຈັກທີ່ຕັ້ງໄວ້ແລ້ວໃນເຂດຄາລາເຕຍກໍຕາມ ແຕ່ຈຸດໝາຍປາຍທາງທີ່ໂປໂລຈະໄປແມ່ນເພື່ອປະກາດໃນເຂດທີ່ບໍ່ມີຄຣິດສະຕຽນເທື່ອຄື ມາເກໂດເນຍ ແລະ ອະຊາຢາ.




**8** ກ. ຕົວອັກສອນໃດໝາຍຄາລາເຕຍ? ____________________

ຂ. ຕົວອັກສອນໃດໝາຍມາເກໂດເນຍ? ____________________

ຄ. ອັກສອນໃດໝາຍອະຊາຍາ? ____________________

**9** ກ. ເປົ້າໝາຍໃນເທື່ອທຳອິດທີ່ໂປໂລອອກໄປປະກາດຄືເຂດໃດ? ____________

ຂ. ເທື່ອທີສອງເດ? ____________ ແລະ ____________

**10** ຕໍ່ໄປເຮົາຈະຮຽນເລື່ອງການປະກາດໃນເມືອງເທຊະໂລນິກ ເມືອງຟີລິບປອຍ ເມືອງ ໂກລິນໂທ ໆ ລ ໆ. ໃນຫຼັກສູດເຫຼັ້ມທີສອງຈະຮຽນຢ່າງລະອຽດ. ໃນບົດຮຽນນີ້ ພຽງແຕ່ ຢາກໃຫ້ຊອກຫາໃນແຜນທີ່ແລ້ວຕອບດັ່ງຕໍ່ໄປນີ້:

ກ. ເມືອງເທຊະໂລນິກຢູ່ແຂວງໃດ? ____________________

ຂ. ຟີລິບປອຍຢູ່ແຂວງໃດ? ____________________

ຄ. ໂກລິນໂທຢູ່ແຂວງໃດ? ____________________

**11** ທ່ານຄົງຈະຮູ້ຈັກຊື່ຂອງເມືອງເຫຼົ່ານັ້ນ ເພາະວ່າພະເຈົ້າໃຊ້ໂປໂລຕັ້ງຄຼິດສະຕະຈັກໃນທັງສາມເມືອງ ແລ້ວໂປໂລຂຽນຈົດໝາຍເຖິງທັງສາມເມືອງ. ທຸກວັນນີ້ເຮົາມີພະທຳຄືຈົດໝາຍເຫຼົ່ານັ້ນໃນພະຄຳພີໃໝ່.

ກ. ໂປໂລຂຍນຈົດໝາຍເຖິງສອງຄຼິດສະຕະຈັກໃດໃນແຂວງມາເກໂດເນຍ?

____________________ ແລະ ____________________

ຂ. ຂຽນຈົດໝາຍເຖິງຄຼິດສະຕະຈັກໃດໃນແຂວງອະຊາຍາ? ____________________

**12** ໂປໂລຖືກຂົ່ມເຫັງ ຖືກເຂົາຊັງ ທັງຖືກຂັງຄຸກ ແຕ່ພະເຈົ້າຊ່ວຍໃຫ້ເພິ່ນຕັ້ງຄຼິດສະຕະ ຈັກແຂງແຮງໄວ້ໃນທັງສອງແຂວງຄື ແຂວງມາເກໂດເນຍ ແລະອະຂາຢາ. ຫຼັງຈາກນັ້ນ ເພິ່ນກັບ ໄປກຸງເຢລູຊາເລັມແລະໄປອັນຕີໂອເຂຍກ່ອນເດີນທາງໄປປະກາດເທື່ອທີສາມ.

ໂປໂລໄປປະກາດເທື່ອທີສາມ




ເທື່ອທີສາມ ໂປໂລໄປປະກາດໃນແຂວງໃດ? ______________________________

**13** ໃນເທື່ອທີສາມນີ້ ໂປໂລໄປຢ້ຽມຄຼິດສະຕະຈັກທີ່ຕັ້ງໄວ້ແລ້ວ. ໄປຄາລາເຕຍກ່ອນ ແລະ ກ່ອນຈະກັບໄປບ້ານເພິ່ນໄປຢ້ຽມຄຼິດສະຕະຈັກໃນແຂວງມາເກໂດເນຍແລະອະຂາຢາ ແຕ່ຈຸດປະສົງສຳຄັນທີ່ເພິ່ນມານີ້ກໍເພື່ອປະກາດຂ່າວປະເສີດໃຫ້ບ່ອນທີ່ຍັງບໍ່ຮູ້ເທື່ອ. ເທື່ອທີສາມນີ້ ໂປໂລໄປປະກາດຂ່າວປະເສີດໃໝ່ໃນແຂວງໃດ? ______________________________

*ໝາຍເຫດ: ແຂວງອາເຊຍໃນສະໄໝນັ້ນ ບໍ່ແມ່ນອັນດຽວກັນກັບທະວີບອາຊີໃນສະໄໝນີ້. ທຸກວັນນີ້ ເປັນເຂດຕາເວັນອອກຂອງປະເທດຕູລະກີ.*

**14** ສຳຄັນທີ່ທ່ານຈະສັງເກດຮູ້ດີວ່າ ທຸກເທື່ອທີ່ໂປໂລເດີນທາງໄປປະກາດເພິ່ນມີຈຸດໝາຍ ສອງປະການຄື:

- ໄປປະກາດຂ່າວປະເສີດໃນບ່ອນໃໝ່ ແລະ
- ກັບໄປຢ້ຽມຢາມຄຼິດສະຕະຈັກທີ່ຕັ້ງໄວ້ແລ້ວ

ແຕ່ທຸກເທື່ອ ຈຸດໝາຍສຳຄັນທີ່ສຸດຄື ການປະກາດໃນບ່ອນໃໝ່

ກ. ເທື່ອທຳອິດ ໂປໂລເດີນທາງໄປປະກາດຢູ່ໃສ? ______________________________

ຂ. ເທື່ອທີສອງໄປແຂວງໃດແດ່? ______________________________

ຄ. ເທື່ອທີສາມໄປປະກາດໃນແຂວງໃດ? ______________________________

**15** ໃນແຂວງອາເຊຍ ໂປໂລຢູ່ໃນເມືອງໃຫຍ່ທີ່ເປັນສູນກາງແລະຄົນຈາກບ້ານຕ່າງ ໆ ໃນແຂວງນັ້ນເຂົ້າມາຟັງ. ໂປໂລປະກາດຈາກເມືອງໃດໃນແຂວງອາເຊຍ ເທື່ອທີສາມທີ່ເດີນທາງໄປປະກາດນີ້? (ເບິ່ງແຜນທີ່ກໍໄດ້) ______________________________

**16** ພະທຳເອເຟໂຊໃນພະຄຳພີໃໝ່ເປັນອັນທີ່ໂປໂລຂຽນໄວ້ເຖິງຄຼິດສະຕະຈັກເມືອງນັ້ນ.

ກ. ໂປໂລຕັ້ງຄຼິດສະຕະຈັກໃນເມືອງເອເຟໂຊໃນເທື່ອໃດທີ່ໄປປ່າວປະກາດ? (ເລືອກ)

_______ ເທື່ອທຳອິດ _______ ເທື່ອທີສອງ _______ ເທື່ອທີສາມ

ຂ. ເມືອງເອເຟໂຊຢູ່ໃນແຂວງໃດ? ________________________________________




**17** ກ. ຕົວອັກສອນໃດໝາຍຄາລາເຕຍ? ______________________________________

ຂ. ອັກສອນໃດໝາຍມາເກໂດເນຍ? ______________________________________

ຄ. ອັກສອນໃດໝາຍອະຂາຢາ? ________________________________________

ງ. ອັກສອນໃດໝາຍແຂວງອາເຊຍ? ______________________________________

**18** ທຸກເທື່ອ ໂປໂລໄປຫາຄຼິດສະຕະຈັກທີ່ຕັ້ງໄວ້ກ່ອນ ແລ້ວຕໍ່ໄປອອກໄປປະກາດໃນແຂວງໃໝ່

ກ. ເທື່ອທຳອິດທີ່ເດີນທາງ ໂປໂລໄປຕັ້ງຄຼິດສະຕະຈັກໄວ້ຢູ່ໃສ? __________________

ຂ. ເທື່ອທີສອງ ຕັ້ງຄຼິດສະຕະຈັກໄວ້ໃສ? __________________ ແລະ _____________

ຄ. ເທື່ອທີສາມເດ? ___________________________________________________

**19** ກ. ເພິ່ນຕັ້ງຄຼິດສະຕະຈັກໃນເຂດຄາລາເຕຍເທື່ອໃດ? _________________________

ຂ. ຕັ້ງຄຼິດສະຕະຈັກເມືອງເທຊະໂລນິກເທື່ອໃດ? ______________________________

ຄ. ຟີລິບປອຍເທື່ອໃດ? ______________________________________________

ງ. ໂກລິນໂທເທື່ອໃດ? ______________________

ຈ. ໃນເມືອງເອເຟໂຊເທື່ອໃດ? ________________



* ( ກຈກ 22:21 )

**20** ຫຼັງຈາກເທື່ອທີສາມ ໂປໂລກັບໄປກຸງເຢລູຊາເລັມ ເພິ່ນບໍ່ໄດ້ໄປເມືອງອັນຕີໂອເຂຍ. (ເລື່ອງນີ້ເຮົາຮຽນມາແລ້ວໃນການບ້ານບົດທີໜຶ່ງພາກຕົ້ນ.)

ໂປໂລບໍ່ໄດ້ກັບໄປອັນຕີໂອເຂຍ ເພາະຫຍັງ? (ເລືອກ)

ກ. ເພິ່ນເຈັບ

ຂ. ບໍ່ຢາກໄປ

ຄ. ຖືກຈັບຂັງໄວ້

**21** ເຂົາຂັງໂປໂລໄວ້ໃນຄຸກກຸງເຢລູຊາເລັມຫຼາຍປີ ພວກສາສະໜາຢິວຫາຄວາມຢ່າງບໍ່ຈິງໃສ່. ຄວາມ ຈິງທີ່ເຂົາຂັງໄວ້ກໍຍ້ອນໄມ້ກາງແຂນ (ຄລຕ 5:11). ຕໍ່ໄປເຂົາສົ່ງໂປໂລໄປພິພາກສາ ຕໍ່ໜ້າເຈົ້າ ຈັກກະພັດໂລມ (ຕາມທີ່ທ່ານຮຽນມາໃນການບ້ານບົດທີ 6 ພາກປາຍ)

ໄປກຸງໂລມເປັນນັກໂທດ:




ກ. ເຂົາສົ່ງໂປໂລໄປພິພາກສາໃນກຸງໃດ? ___________________________________

ຂ. ໄປໃນສະພາບໃດ? ________________________________________________

> ມາເຖິງນີ້ ເຮົາຈະສະຫລູບເລື່ອງການເດີນທາງຂອງໂປໂລຮ່ວມມາເປັນ 4 ເທື່ອຄື:
> ໄປປະກາດ: ເທື່ອທີ 1 ເຖິງ ຄາລາເຕຍ
> ເທື່ອທີ 2 ເຖິງ ມາເກໂດເນຍ ແລະ ອະຂາຢາ
> ເທື່ອທີ 3 ເຖິງ ແຂວງອາເຊຍ
> ໄປເປັນນັກໂທດ: ເຖິງ ກຸງໂລມ
> ໃຫ້ທ່ານເອົາເຈ້ຍເສດ ຂຽນໄປຫຼາຍເທື່ອຈົນຈື່ໃຫ້ໄດ້ດີ

**22** ພະທຳກິດຈະການລາຍງານເລື່ອງປະຫວັດຊີວິດຂອງໂປໂລຈົນເພິ່ນມາເຖິງກຸງໂລມ. ແຕ່ເຮົາ ບັນທຶກມາຈາກຈົດໝາຍຕ່າງ ໆ ແລະຈາກນັກປະຫວັດສາດວ່າ ເຂົາປ່ອຍໂປໂລໄວ້ໃນກຸງ ໂລມ ຄາວໜຶ່ງແລ້ວຂັງເພິ່ນໄວ້ອີກຕໍ່ໄປ. ຫຼັງຈາກຖືກຂັງໄວ້ເທື່ອສຸດທ້າຍ ເພິ່ນຂຽນຈົດໝາຍ ສະບັບສຸດ ທ້າຍໄປເຖິງຕີໂມທຽວ(ພະທຳຕີໂມທຽວສະບັບທີສອງ). ໂປໂລຕັກເຕືອນໃຫ້ ຕີໂມທຽວຕັ້ງໝັ້ນຄົງ ໃນວຽກການງານຂອງພະເຈົ້າ.

ກ. ແມ່ນເທື່ອໃດທີ່ໂປໂລປະກາດ ທີ່ຕີໂມທຽວຮັບເຊື່ອ? ________________________

ຂ. ແມ່ນໃນເທື່ອໃດທີ່ຕີໂມທຽວ ເລີ້ມຕົ້ນໄປປະກາດນຳໂປໂລ? __________________

**23** ໂປໂລຖືກຂັງໄວ້ໃນຄຸກເປັນເທື່ອສຸດທ້າຍ. ໂປໂລແກ່ແລ້ວເຫັນວ່າບໍ່ເຫິງຈະຕາຍຍ້ອນຄວາມເຊື່ອ. ເພິ່ນຂຽນຂໍ້ຄວາມເຖິງຕີໂມທຽວດັ່ງຕໍ່ໄປນີ້:

> "ເຮົາໄດ້ອົດສາສູ້ໃນການແຂ່ງຂັນ
> ເຮົາໄດ້ແລ່ນແຂ່ງຂັນຈົນເຖິງທີ່ສຸດ
> ເຮົາໄດ້ຮັກສາຄວາມເຊື່ອໄວ້ແລ້ວ
> ແຕ່ນີ້ຕໍ່ໄປ ພວງມາໄລຄືລາງວັນແຫ່ງຄວາມຊອບທຳ
> ຊຶ່ງຈັດໄວ້ຖ້າເຮົາແລ້ວ.... " (2 ຕີໂມທຽວ 4:7-8)

ບໍ່ມີໃຜຈັກຄົນທີ່ຕັ້ງໃຈປະກາດພະທຳຢ່າງໂປໂລ. ບໍ່ມີໃຜຕໍ່ສູ້ຄຳສອນບໍ່ຈິງຢ່າງໂປໂລ ແລ້ວເພາະສາເຫດນັ້ນ ໂປໂລຖະຫວາຍຊີວິດເພື່ອພະອົງ. ຫຼາຍປີກ່ອນໂປໂລຂຽນໄວ້ວ່າ:

> "ເຮົາບໍ່ຕ້ອງການອວດນອກຈາກເລື່ອງໄມ້ກາງແຂນ ຂອງພະເຢຊູຄຣິດ
> ເຈົ້າຂອງພວກເຮົາ. " (ຄລຕ 6:14)

ເພິ່ນກໍເລີຍຕາຍ ແຕ່ຍັງອວດໃນປະການດຽວຄື ໄມ້ກາງແຂນຂອງພະເຢຊູ.

ກ. ໂປໂລຕາຍໃນກຸງໃດ? ____________________________________________

ຂ. ແລ້ວຮັບລາງວັນຈາກໃຜ? ________________________________________

ຕັ້ງແຕ່ວັນທີ່ໂຊໂລກັບໃຈໃໝ່ຕາມທາງ ໄປດາມາເຊ ຈົນເຖິງວັນທີ່ໂປໂລຮັບລາງວັນ ຈາກພະອົງໃນຟ້າສະຫວັນ ໂປໂລຕັ້ງຢູ່ຢ່າງໝັ້ນຄົງຮັບໃຊ້ພະອົງ.
(ເບິ່ງ 1 ກລທ 15:58)

ໂປໂລຮັບລາງວັນແລ້ວ!
ຂໍພະເຈົ້າຊ່ວຍໃຫ້ພວກເຮົາໃຫ້ຕັ້ງໝັ້ນຄົງ ຢ່າງໂປໂລ.



| ຄຳຕອບ: | |
|---|---|
| **1** | *ຄາລາເຕຍ* |
| **2** | *ກ. ເອົາຄວາມຊ່ວຍເຫຼືອ ຂ. ໄປຮ່ວມກັບພວກອັກຄະສາວົກ* |
| **3** | *ກ. ຄາລາເຕຍ ຂ. ແຂວງມາເກໂດເນຍແລະແຂວງອະຊາຢາ* |
| **4** | *ກ. ຄາລາເຕຍ ຂ. ອະຊາຢາ ແລະ ມາເກໂດເນັຍ* |
| **5** | *ກ. ຕີໂມທຽວ ຂ. ມາເກໂດເນຍ ແລະ ອະຊາຢາ* |
| **6** | *ກ. ຄາລາເຕຍ ຂ. ມາເກໂດເນຍ ແລະ ອະຊາຢາ ຄ. ຄາລາເຕຍ* |
| **7** | *ກ. ຄາລາເຕຍ ຂ. ມາເກໂດເນຍ ຄ. ອະຊາຢາ* |
| **8** | *ກ. ປ ຂ. ບ ຄ. ຜ* |
| **9** | *ກ. ຄາລາເຕຍ ຂ. ມາເກໂດເນຍ ແລະ ອະຊາຢາ* |
| **10** | *ກ. ມາເກໂດເນຍ ຂ. ມາເກໂດເນຍ ຄ. ອະຊາຢາ* |
| **11** | *ກ. ຟີລິບປອຍ ແລະ ເທຊະໂລນິກ ຂ. ໂກລິນໂທ* |
| **12** | *ແຂວງອາເຊຍ* |
| **13** | *ແຂວງອາເຊຍ* |
| **14** | *ກ. ຄາລາເຕຍ ຂ. ມາເກໂດເນຍ ແລະ ອະຊາຢາ ຄ. ແຂວງອາເຊຍ* |
| **15** | *ເມືອງເອເຟໂຊ* |
| **16** | *ກ. ເທື່ອທີສາມ ຂ. ແຂວງອາເຊຍ* |
| **17** | *ກ. ປ ຂ. ທ ຄ. ນ ງ. ບ* |
| **18** | *ກ. ຄາລາເຕຍ ຂ. ມາເກໂດເນຍ ແລະ ອະຊາຢາ ຄ. ແຂວງອາເຊຍ* |
| **19** | *ກ. ທີ 1 ຂ. ທີ 2 ຄ. ທີ 2 ງ. ທີ 2 ຈ. ທີ 3* |
| **20** | *ຖືກຈັບຂັງໄວ້* |
| **21** | *ກ. ໂລມ ຂ. ເປັນນັກໂທດ.* |
| **22** | *ກ. ເທື່ອທຳອິດ ຂ. ເທື່ອທີສອງ* |
| **23** | *ກ. ໂລມ ຂ. ຈາກພະອົງ* |

## ໃນການປະຊຸມບົດທີ 14

# ເພື່ອປະຕິບັດຕາມພະທຳຄາລາເຕຍ

**1** ການຮ່ວມກັນເທື່ອນີ້ເປັນເທື່ອສຸດທ້າຍ ກ່ອນຈະເສັງຫຼັກສູດນີ້. ໃຫ້ເຮົາພິຈາລະນາເລື່ອງຈຸດປະສົງທີ່ຮຽນມາ. ຕ່າງຄົນມີເຫດຜົນຕ່າງກັນໄປທີ່ຢາກຮຽນ

ກ. ບາງຄົນຢາກໄດ້ຄະແນນດີ

ຂ. ບາງຄົນຢາກດຳເນີນຊີວິດຢ່າງໃກ້ສິດກັບພະອົງ

ຄ. ບາງຄົນຢາກສະແດງຄວາມຮູ້

ງ. ບາງຄົນຢາກໃຊ້ພະທຳຊ່ວຍຄົນອື່ນ

ຈຸດປະສົງໃດທີ່ຖືກກວ່າ? ______________________________________________

**2** ໃຈຄວາມຂອງຫຼັກສູດ ສ.ອ.ນ. ເປັນຄວາມທີ່ຍົກມາຈາກພະທຳ 2 ຕມທ 2:2 "... ທີ່ສາມາດສອນຄົນອື່ນໄດ້ດ້ວຍ. " ດັ່ງນັ້ນ ເຮົາຖືວ່າການໃຊ້ພະທຳຊ່ວຍຄົນອື່ນ ເປັນຈຸດຫມາຍຢ່າງເຫມາະສົມ. ຕົວຢ່າງ ທ່ານອາດຈະສົນທະນາກັບຄົນທີ່ບອກວ່າ "ຄຳຕັກເຕືອນຂອງໂປໂລບໍ່ສຳຄັນເທົ່າກັບຄຳສອນ ຂອງເປໂຕ ເພາະເປໂຕຢູ່ກັບພະອົງ ແລ້ວຮຽນຈາກພະອົງໂດຍກົງ. ໂປໂລບໍ່ໄດ້ເປັນອັກຄະສາວົກແທ້. " ທ່ານອາດຈະຕອບເພິ່ນຢ່າງໃດ?

(ຍົກ ຄລຕ 1:11-24 ມາ) ______________________________________________

______________________________________________

______________________________________________

______________________________________________

______________________________________________

______________________________________________

*ເປັນການສຳຄັນຫຼາຍທີ່ທ່ານຈະໃຊ້ພະທຳຄາລາເຕຍຢ່າງເປັນຜົນປະໂຫຍດ ແຕ່ເຮົາຈຳເປັນຕ້ອງຊຳນານມັນເສຍກ່ອນ.*

- *ຕ້ອງຮຽນຮູ້ຊອກຫາຂໍ້ພະຄຳພີທີ່ຕ້ອງການໃຊ້*
- *ຕ້ອງຮູ້ອະທິບາຍແລະນຳໃຫ້ເຂົາປະຕິບັດຕາມຈຶ່ງຈະຊ່ວຍເຂົາໄດ້*

## ການຊອກຫາຂໍ້ທີ່ຕ້ອງການ

ມີບາງຄົນທີ່ທ່ອງຂຶ້ນໃຈງ່າຍ ແລະມີບາງຄົນທີ່ທ່ອງຂຶ້ນໃຈຍາກ. ຄົນທີ່ທ່ອງງ່າຍອາດຈະບໍ່ມີບັນຫາໃນການ ຊອກຫາຂໍ້ພະຄຳພີທີ່ຕ້ອງການໃຊ້ ແຕ່ຄົນທີ່ທ່ອງຍາກ ອາດຈະເປັນບັນຫາ. ຖ້າຈະທວນຄືນເລື່ອງໃຈ ຄວາມຂອງພະທຳຄາລາເຕຍ ອາດຈະດີໃຫ້ກັບໄປເບິ່ງທຸກ ໆ ຮູບ ແລະທຸກແຜ່ນທີ່ຢູ່ໃນຫຼັກສູດນີ້ ເພື່ອ ຊ່ວຍໃຫ້ຈື່ຈຳໂຄງຮ່າງ.

> ຕໍ່ໄປນີ້ ເຮົາຈະຝຶກຊອກຫາເລື່ອງຕ່າງໆ ຈາກພະທຳຄາລາເຕຍ. ເປັນການທວນຄືນກ່ອນບົດ ເສັງສຸດທ້າຍ. ຜູ້ນຳຈະຍົກເລື່ອງຈາກພະທຳຄາລາເຕຍ ເພື່ອໃຫ້ທ່ານຊອກຫາ ບົດແລະຂໍ້ທີ່ກ່າວເລື່ອງນັ້ນ. ຢ່າຟ້າວເບິ່ງຄຳຕອບ ຢ້ານວ່າຈະບໍ່ສາມາດຫາໃນເວລາສອບເສັງ.

**3** ຄຳແນະນຳຢູ່ໃນຄາລາເຕຍ ບົດແລະຂໍ້ໃດ? ________________________________

**4** ໂປໂລເລີ້ມເຕືອນເລື່ອງຜູ້ສອນບໍ່ຈິງ (ຂ່າວປະເສີດອື່ນ) ໃນບົດແລະຂໍ້ໃດ? ___________

**5** ໂປໂລຍົກຂໍ້ອ້າງຈາກພະບັນຍັດສອງໃນພະຄຳພີເດີມ. ຍົກມາໃນພະທຳຄາລາເຕຍບົດແລະຂໍ້ໃດ?____________________________ ແລະ __________________________

**6** ໂປໂລ ຍົກເລື່ອງຜົນຂອງພະວິນຍານ ແລະການງານຂອງມະນຸດທຳມະດາໃນ ຄາລາເຕຍ ບົດໃດ ຕັ້ງແຕ່ ຂໍ້ໃດ ເຖິງຂໍ້ໃດ? ___________________________________________

**7** ໂປໂລກ່າວເລື່ອງພະສັນຍາ(ມໍລະດົກ)ຕັ້ງແຕ່ບົດແລະຂໍ້ໃດ ເຖິງບົດແລະຂໍ້ໃດ? ________

**8** ໂປໂລກ່າວຄຳເຕືອນໃນຕອນສຸດທ້າຍ ແລະສະແດງຄຳນັບຖື ໃນບົດໃດ ຂໍ້ໃດແດ່? ______

**9** ໂປໂລກ່າວຄຳພະຍານທີ່ເປັນອັກຄະສາວົກໃນບົດໃດຂໍ້ໃດແດ່? __________________

*ຈຶ່ງມີສິດຕໍ່ຕ້ານຄົນທີ່ມາສອນບໍ່ຈິງ.*

**10** ໂປໂລບອກໃຫ້ຮັບພາລະອັນໜັກຂອງກັນແລະກັນ (ແລະການຫວ່ານຕາມພະວິນຍານຕໍ່ໄປ) ໃນບົດ ແລະຂໍ້ໃດ? _______________________________________________

**11** ໂປໂລຍົກເລື່ອງພະບັນຍັດຫຼືຄວາມເຊື່ອໃນບົດແລະຂໍ້ໃດແດ່? ___________________

*ໂປໂລອະທິບາຍອີກວ່າ ເຂົາໄດ້ລອດຈາກຄາມບາບໂດຍຄວາມເຊື່ອ ດັ່ງນັ້ນ ທີ່ເຂົາຈະປະຕິບັດຕໍ່ໄປ ກໍຈະປະຕິບັດໂດຍຄວາມເຊື່ອໃນພະເຢຊູ ບໍ່ແມ່ນໂດຍພະບັນຍັດ.*

**12** ມີບົດແລະຂໍ້ໃດທີ່ກ່າວວ່າອັກຄະສາວົກອື່ນໆ ຮັບຮູ້ວ່າໂປໂລກໍເປັນອັກຄະສາວົກ? ______

*ທັງເຂົາຍອມຮັບວ່າຕີໂຕທີ່ເປັນຄຣິສຕຽນຕ່າງຊາດບໍ່ຕ້ອງຮັບພິທີຕັດ.*

**13** ບ່ອນໃດທີ່ໂປໂລສອນໃຫ້ຕັ້ງໝັ້ນຢູ່ໃນເສລີພາບຂອງພະຄຼິດ? ___________________

**14** ບ່ອນໃດທີ່ໂປໂລເປັນຫ່ວງຜູ້ທີ່ເຊື່ອ? ______________________________

*ເຫັນວ່າເຂົາຮັບຟັງຜູ້ທີ່ສອນບໍ່ຈິງ ເລີຍປ່ຽນທ່າທີ*

**15** ໂປໂລຕໍ່ວ່າເປໂຕໃນເມືອງອັນຕີໂອເຂຍໃນບົດແລະຂໍ້ໃດແດ່? ________________

**16** ຫຼັງຈາກຕໍ່ວ່າເປໂຕ ໂປໂລເນັ້ນວ່າພວກຢິວກັບພວກຕ່າງຊາດຕ້ອງພົ້ນໂດຍທາງຄວາມເຊື່ອຢ່າງດຽວ ເຫັນໃນບົດແລະຂໍ້ໃດແດ່? ______________________________

**17** ໂປໂລຍົກຄຳປຽບທຽບເລື່ອງນາງຮາກາ ແລະນາງຊາລາຄືຜູ້ໜຶ່ງເປັນຂ້າທາດແລະອີກຜູ້ໜຶ່ງມີເສລີພາບ ໃນ ບົດແລະຂໍ້ໃດແດ່? ______________________________

## ວິທີອະທິບາຍແລະນຳມາໃຊ້

**18** ຖ້າທ່ານເຫັນພີ່ນ້ອງຄົນໃດທີ່ຕ້ອງຖືກົດນີ້ຫຼືກົດນັ້ນຈຶ່ງຈະໄດ້ລອດ ທ່ານຢາກສອນເພິ່ນເລື່ອງການຄືນດີກັບພະເຈົ້າໂດຍທາງຄວາມເຊື່ອ. ທ່ານຈະຍົກບົດແລະຂໍ້ໃດ ແລະອະທິບາຍຢ່າງໃດ? ______________________________

**19** ກ. ຖ້າທ່ານຢາກເນັ້ນໜັກ ຜົນຂອງພະວິນຍານວ່າເປັນຢ່າງໃດ ແລະຕ່າງກັບມະນຸດທຳມະດາຢ່າງໃດ. ທ່ານອາດຈະຍົກບົດແລະຂໍ້ໃດ ແລະຮູບໃດ? ________________

ຂ. ຈະອະທິບາຍຢ່າງໃດ? ______________________________

**20** ກ. ຜູ້ທີ່ຮັບພາລະເປັນຜູ້ນຳໃນຄຼິດສະຕະຈັກ ອາດຈະເປັນຫ່ວງພີ່ນ້ອງຫຼາຍ. ໂປໂລຍົກການເປັນຫ່ວງນັ້ນມາ ໃນບົດແລະຂໍ້ໃດ? ______________________________

ຂ. ປຽບທຽບກັບຫຍັງໃນຮູບ ໜ້າ 131? ______________________________

*ໃຫ້ອ່ານ ຄລຕ 4:19 ອີກ.*

*ໃຫ້ພວກເຮົາອ້ອນວອນເພື່ອກັນແລະກັນ ໃນເວລາຈະຕຽມຕົວເສັງຈະສາມາດຈື່ຈຳໄດ້ດີ. ໃຫ້ທ່ານທວນຄືນໂດຍຮູ້ຕອບບົດເສັງທຸກໆ ບົດ ແລ້ວໃຫ້ທ່ານຝຶກຊອກຫາຄຳສອນເລື່ອງຕ່າງໆ ໃນພະຄຳພີ. ທ່ານຖືພະຄຳພີມາເວລາເສັງກໍໄດ້!*

ຄຳຕອບ:

**1** *"ຂ" ແລະ "ງ" ຖືກທີ່ສຸດ. "ກ" ກໍດີຢູ່ ແຕ່ບໍ່ເຖິງສຳຄັນທີ່ສຸດ. "ຄ" ບໍ່ຖືກ.*

**2** *ໃນ ຄລຕ 1:11-12 ໂປໂລບອກວ່າເພິ່ນໄດ້ຮັບຂ່າວປະເສີດໂດຍພະເຢຊູຄຣິດຊົງສະແດງ. ຫຼັງຈາກກັບໃຈໃໝ່ ເພິ່ນອອກໄປຢູ່ປະເທດອາລະເບຍ 3 ປີ (ເຊັ່ນດຽວກັນ ເປໂຕ ຢູ່ກັບພະເຢຊູ 3 ປີ) ເມື່ອໄປພົບອັກຄະສາວົກໃນກຸງເຢລູຊາເລັມ ເພິ່ນຢູ່ກັບເປໂຕພຽງ 15 ວັນ. (ຄລຕ 1:18-20)*

**3** *1:1-5*

**4** *1:6-10*

**5** *3:10 ແລະ 3:13*

**6** *5:16-26*

**7** *(3:15 - 4:7)*

**8** *6:11-18*

**9** *1:11-24*

**10** *6:1-10*

**11** *3:1-14*

**12** *2:1-10*

**13** *5:1-15*

**14** *4:8-20*

**15** *2:11-14*

**16** *2:15-21*

**17** *4:21-31*

**18** *(ໃຫ້ໝູ່ດ້ວຍກັນວັດຜົນອາດຈະຍົກ ຄລຕ 3:6-9)*

**19** *ກ. ຍົກ ຄລຕ 5:16-26 ແລະຍົກຮູບຫນ້າ 216 ຂ. (ໃຫ້ໝູ່ວັດຜົນ)*

**20** *ກ. ຄລຕ 4:8-20 ຂ. ແມ່ທີ່ຄອດລູກໃໝ່*